# ປັດໄຈທີ່ສົ່ງຜົນຕໍ່ການຮຽນຂອງນັກສຶກສາຊັ້ນປີທີ 3 ຂອງຄະນະວິທະຍາສາດທໍາມະຊາດ

**ລັດສະໝີ ພອນໄຊ***

*ມະຫາວິທະຍາໄລ ສະຫວັນນະເຂດ, ສປປ ລາວ*

****ຕິດຕໍ່ພົວພັນ:** ລັດສະໝີ ພອນໄຊ, ຫ້ອງການຄົ້ນຄວ້າວິທະຍາສາດ, ມະຫາວິທະຍາໄລສະຫວັນນະເຂດເບີໂທ: +8562022264799, ອີເມວ: lsmphonesay@yahoo.com*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 06 ມັງກອນ 2023*
*ການປັບປຸງ: 21 ພຶດສະພາ 2023*
*ການຕອບຮັບ: 15 ມິຖຸນາ 2023*

## ບົດຄັດຫຍໍ້

ໃນການວິໄຈຄັ້ງນີ້ ມີຈຸດປະສົງເພື່ອວິເຄາະປັດໄຈທີ່ສົ່ງຜົນຕໍ່ການຮຽນຂອງນັກສຶກສາຊັ້ນປີທີ 3 ຄະນະວິທະຍາສາດ ທໍາມະຊາດ, ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາ ແມ່ນນັກສຶກສາປີທີ 3 ຄະນະວິທະຍາສາດ ທໍາມະຊາດຈໍານວນ 91 ຄົນ, ແລະ ວິເຄາະຂໍ້ມູນໃຊ້ໂປຣແກຣມ SPSS FOR WINDOWS ໃນການຫາຄ່າສະຖິຕິພັນລະນາ ແລະ ການວິເຄາະການທົດຖອຍດ້ວຍວິທີ Enter (Enter Regression Analysis ), ຜົນການສຶກສາພົບວ່າ: ປັດໄຈດ້ານຕ່າງໆ ທີ່ມີຜົນຕໍ່ການຮຽນຂອງນັກສຶກສາຫຼາຍກວ່າໝູ່ແມ່ນປັດໄຈທາງດ້ານຄູສອນເຊິ່ງມີຄ່າສະເລ່ຍເທົ່າກັບ 3.76 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.85, ຮອງລົງມາແມ່ນປັດໄຈທາງດ້ານຄອບຄົວ ຊຶ່ງມີຄ່າສະເລ່ຍເທົ່າກັບ 3.74 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.94 ແລະ ດ້ານພຶດຕິກໍາຂອງຜູ້ຮຽນ ຊຶ່ງມີຄ່າສະເລ່ຍເທົ່າກັບ 3.61 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.92, ຄ່າສະເລ່ຍໜ້ອຍທີ່ສຸດແມ່ນສິ່ງອໍານວຍຄວາມສະດວກຕໍ່ການຮຽນ ຊຶ່ງມີຄ່າສະເລ່ຍເທົ່າກັບ 3.23 ແລະ ຄ່າຜັນປ່ຽນມາດຕະຖານ ເທົ່າກັບ 1.01. ແລະ ປັດໄຈທີ່ສາມາດພະຍາກອນຜົນການຮຽນຂອງນັກສຶກສາໄດ້ມີຢູ່ 3 ປັດໄຈຄື: ປັດໄຈດ້ານຜູ້ສອນ ແລະ ປັດໄຈດ້ານຄອບຄົວ ສາມາດພະຍາກອນຜົນການຮຽນຂອງຜູ້ຮຽນໄດ້ ດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.05 ສ່ວນປັດໄຈດ້ານພຶດຕິກໍາຂອງຜູ້ຮຽນມີຄວາມສໍາພັນກັບຜົນການຮຽນດ້ວຍລະດັບຄວາມສໍາຄັນທາງສະຖິຕິ 0.01 ເຊິ່ງສາມາດຂຽນສົມຜົນພະຍາກອນໄດ້ດັ່ງນີ້:

$$\hat{Y} = 2.72 - 0.27X_1 + 0.43X_4 - 0.24X_5$$

**ຄໍາສັບສໍາຄັນ:** *ປັດໄຈ, ຜົນການຮຽນຂອງນັກສຶກສາ, ມະຫາວິທະຍາໄລສະຫວັນນະເຂດ*

# The factors that affect the learning of students in the 3rd year of the Faculty of Natural Sciences Savannakhet University

**Latsamy PHONESAY***

Savannakhet University, Savannakhet University, Lao PDR

**Correspondence: Latsamy PHONESAY, Research office, Savannakhet University, Savannakhet University, Tel: +8562022264799, Email: lsmphonesay@yahoo.com*

***Article Info:***
*Submitted: Jan 06, 2023*
*Revised: May 21, 2023*
*Accepted: Jun 15, 2023*

## Abstract

The purpose of this research was to analyze the factors that affect the students' learning of sophomore at the Faculty of Natural Science. The sampling was 91 of sophomore at Faculty of Natural Science, the data was analyzed by using SPSS for WINDOWS to generate descriptive statistics and the analysis was analyzed by (Enter Regression Analysis). The results of this research found: factors that affect students learning rather than any factors was the teacher factor, which has an averaged 3.76 and the standard deviation was 0.85. The second was the family factor, which has an average value of 3.74 and the standard deviation was 0.95 and learner behavior, which has an average value of 3.61 and the standard was 0.92. The lowest mean was the learning facilities, which averaged 3.23 and the standard deviation was 1.01 and there are three factors that can predict student achievements are instructors and family factor can predict students' learning outcomes with a statistical significance of 0.05 but the learner's behavioral factors were related the learning outcomes with a statistical significance of 0.01, which can be written as follows:

$$\hat{Y} = 2.72 - 0.27X_1 + 0.43X_4 - 0.24X_5$$

**Keywords:** *Factors, Student outcomes, Savannakhet University.*

## 1. ພາກສະເໜີ

ການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດຈຶ່ງເປັນປັດໃຈທີ່ສຳຄັນໃນການພັດທະນາ ປະເທດ ແລະ ການພັດທະນາການສຶກສາ ໂດຍການພັດທະນາຄົນໃຫ້ໄດ້ທັງດ້ານປະລິມານແລະຄຸນນະພາບ ເຊິ່ງສອດຄ່ອງກັບແຜນຍຸດທະສາດການສຶກສາຂອງລາວທີ່ເວົ້າວ່າ ຕ້ອງເອົາການສຶກສາໄປກ່ອນບາດກ້າວໜຶ່ງ ຄື: ຕ້ອງພັດທະນາຄົນ, ນັກຮຽນຮູ້ປັນຍາຊົນ, ໃຫ້ມີຄວາມຮູ້, ຄວາມສາມາດ ທັງຮ່າງກາຍ, ສະຕິປັນຍາ, ຄຸນນະທຳ, ມີຈະຣິຍະທຳ ແລະ ວັດທະນະທຳໃນການດຳລົງຊີວິດຢູ່ກັບຜູ້ອື່ນໄດ້ຢ່າງມີຄວາມສຸກ (Anothai, 2012)

ໃນປະຈຸບັນນີ້ ສະພາບເສດຖະກິດ-ສັງຄົມໄດ້ມີການປ່ຽນແປງໄປຢ່າງວ່ອງໄວເຊິ່ງມີສ່ວນກໍ່ໃຫ້ເກີດບັນຫາຕໍ່ກັບນັກຮຽນ-ນັກສຶກສາ, ບັນຫາທີ່ເກີດຂຶ້ນກັບນັກສຶກສານັ້ນເຊິ່ງລວມເປັນດ້ານໃຫຍ່ໆອາດໄດ້ແກ່: ບັນຫາດ້ານພຶດຕິກຳການຮຽນ, ຄຸນນະພາບດ້ານການສິດສອນຂອງຄູ, ດ້ານເສດຖະກິດ-ສັງຄົມ, ດ້ານການເຂົ້າຮ່ວມກິດຈະກຳຕ່າງໆ, ບັນຫາດ້ານການພົບເພື່ອນ, ບັນຫາດ້ານແຮງຈູງໃຈໃນການຮຽນ ແລະ ອື່ນໆເປັນຕົ້ນ (Sonpett, 2014) ບັນຫາທີ່ເກີດຂຶ້ນນັ້ນລ້ວນແລ້ວແຕ່ມີຜົນກະທົບຕໍ່ການຮຽນຂອງນັກສຶກສາ, ເຊິ່ງມັນໄດ້ສະແດງອອກຈາກຜົນຂອງການຮຽນຂອງນັກສຶກສາເຫັນວ່າຍັງມີນັກສຶກສາສ່ວນຫຼາຍເກຼດຄະແນນສະເລ່ຍຍັງຫຼຸດຄາດໝາຍ (Linoinou, 2015) ເຊິ່ງອາດເປັນສາເຫດໃຫ້ນັກສຶກສາຮູ້ສຶກເບື່ອໜ່າຍຕໍ່ການຮຽນ, ຂາດຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ,ຈົນເປັນສາເຫດໃຫ້ຮຽນບໍ່ຈົບຕາມໄລຍະເວລາທີ່ກຳນົດ ຫຼື ອາດລາອອກຈາກໂຮງຮຽນ; ນອກນັ້ນສະຖານທີ່ພັກອາໃສຖືວ່າເປັນບ່ອນທີ່ຈະໃຫ້ທັງດ້ານຄວາມຮູ້, ປະສົບການ, ການປັບປຸງບຸກຄະລິກະພາບ, ຄວາມມີລະບຽບວິໄນ, ການສະແດງອອກທາງກາຍ,ວາຈາ ແລະ ຈິດໃຈໄດ້ເປັນຢ່າງດີ ແລະ ຍັງເຮັດໃຫ້ເກີດການຮຽນຮູ້ໃນການຢູ່ຮ່ວມກັນເປັນໝູ່ຄະນະກໍ່ໃຫ້ເກີດຄວາມຮັບຜິດຊອບຄວາມຮັກໃຄ່ປອງດອງກັນ ແລະ ຍັງຊ່ວຍໃຫ້ນັກສຶກສາແຕ່ລະຄົນໄດ້ຮຽນຮູ້ສີລະປະການຢູ່ຮ່ວມກັບບຸກຄົນອື່ນອີກດ້ວຍ (Savannakhet University, 2018).

ເນື່ອງຈາກວ່າ ຜົນສຳເລັດທາງການຮຽນເປັນດັດຊະນີຊີ້ວັດທີ່ມີຄຸນນະພາບທີ່ສຳຄັນທາງການສຶກສາ ແລະ ມີນັກຈິດຕະວິທະຍາ, ນັກການສຶກສາຫຼາຍທ່ານ ໄດ້ເຮັດການສຶກສາປັດໃຈທີ່ມີຜົນກະທົບຕໍ່ຜົນສຳເລັດທາງການຮຽນຢ່າງກ້ວາງຂວາງ ຈາກການສຶກສາຄົ້ນຄວ້າພົບວ່າ ສາເຫດທີ່ມີຜົນກະທົບຕໍ່ຜົນສຳເລັດທາງການຮຽນ ມາຈາກການສະສົມຫຼາຍໆດ້ານ ເຊັ່ນ: Bloom, 1976 (ອ້າງໃນ Anothai, 2012) ໄດ້ກ່າວໄວ້ວ່າ ສິ່ງທີ່ມີອິດທິພົນຕໍ່ຜົນສຳເລັດຂອງການຮຽນຮູ້ປະກອບມີຄື:

1) ພຶດຕິກຳດ້ານຄວາມຮູ້, ຄວາມຄິດ, ເປັນຄວາມຮູ້ຄວາມສາມາດ ໃນການຮຽນຮູ້ ແລະ ທັກສະຂອງຜູ້ຮຽນທີ່ມີມາກ່ອນ.

2) ຄຸນລັກສະນະທາງຈິດໃຈທີ່ເປັນສິ່ງ ທີ່ເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ສິ່ງໃໝ່ໆເຊັ່ນ: ຄວາມສົນໃຈໃນການຮຽນຮູ້, ທັດນະຄະຕິຕໍ່ການຮຽນຮູ້ ແລະ ການຍອມຮັບຄວາມສາມາດຂອງຕົນເປັນຕົ້ນ.

3) ຄຸນນະພາບຂອງການຮຽນ-ການສອນ ໝາຍເຖິງປະສິດທິພາບ ຊຶ່ງຜູ້ຮຽນຈະໄດ້ຮັບຜົນສຳເລັດໃນການຮຽນຮູ້, ຊຶ່ງໄດ້ແກ່ ການມີສ່ວນຮ່ວມໃນການຮຽນ ການສອນ ແລະ ການຍອມຮັບຄວາມສາມາດຂອງຕົນເປັນຕົ້ນ.

ຄວາມສຳເລັດຂອງການຮຽນຮູ້ແມ່ນຄວາມສາມາດຂອງນັກສຶກສາໃນດ້ານຕ່າງໆ ເຊິ່ງ ເກີດຈາກນັກສຶກສາທີ່ໄດ້ຮັບປະສົບການຈາກຂະບວນການຮຽນ ການສອນຂອງຄູ ໂດຍຄູຕ້ອງສຶກສາແນວທາງໃນການວັດ ແລະ ການປະເມີນຜົນ ການສ້າງເຄື່ອງມືວັດ ໃຫ້ມີຄຸນນະພາບນັ້ນ ໄດ້ມີຜູ້ໃຫ້ຄວາມຫມາຍຂອງຜົນສຳເລັດໃນການຮຽນຮູ້ໄວ້ດັ່ງຕໍ່ໄປນີ້

Wilson (1971) ອ້າງໃນ Techasirigyenyong, 2009) ໄດ້ໃຫ້ຄວາມໝາຍຂອງຜົນສຳເລັດທາງການຮຽນວິຊາຄະນິດສາດ ໝາຍເຖິງ ຄວາມສາມາດທາງສະຕິປັນຍາໃນການຮຽນຮູ້ວິຊາຄະນິດສາດ ໄດ້ຈຳແນກພຶດຕິກຳທີ່ພຶ່ງປະສົງທາງພຸດທິພິໃສໃນການຮຽນການສອນວິຊາຄະນິດສາດ ລະດັບຊັ້ນມັດທະຍົມສຶກສາ ຕາມກອບແນວຄິດຂອງບູມ.

Waekaji (2021) ຜົນສຳເລັດທາງການຮຽນວິຊາຄະນິດສາດໝາຍເຖິງ ຄວາມຮູ້ທີ່ໄດ້ຮັບຈາກຂະບວນການຮຽນຮູ້ໃນ ວິຊາຄະນິດສາດ ທີ່ເຮັດໃຫ້ນັກຮຽນເກີດການປ່ຽນແປງວັດໄດ້ຈາກແບບທົດສອບວັດຜົນສຳເລັດທາງການຮຽນວິຊາຄະນິດສາດ.

Thitiporn (2014) ໄດ້ກ່າວວ່າ ຜົນສຳເລັດທາງການຮຽນ ຫມາຍເຖິງຄວາມສາມາດ ຫຼື ຜົນສຳເລັດທີ່ໄດ້

ຮັບຈາກກິດຈະກຳການຮຽນ ການສອນ ເປັນການປ່ຽນແປງໃນພຶດຕິກຳແລະປະສົບການຮຽນຮູ້ ທາງດ້ານພຸດທິພິໃສ ຈິດພິໃສ ແລະ ທັກສະພິໃສ ແລະ ຍັງໄດ້ຈຳແນກຜົນສຳເລັດທາງການຮຽນ ໄວ້ຕາມລັກສະນະຂອງຈຸດປະສົງຂອງການຮຽນການສອນທີ່ແຕກຕ່າງກັນ.

ຈາກການສຳຫຼວດບັນຫາເບື້ອງຕົ້ນພົບວ່າ ບັນຫາການຮຽນຂອງນັກສຶກສາສ່ວນໃຫຍ່ແມ່ນບໍ່ກ້າທີ່ສະແດງອອກ ບໍ່ກ້າຖາມຄູ-ອາຈານເມື່ອບໍ່ເຂົ້າໃຈບົດຮຽນ, ບໍ່ມັກອ່ານບົດຮຽນ, ຂາດຮຽນ ແລະ ບໍ່ເຮັດວຽກບ້ານທີ່ອາຈານໃຫ້ ແລະມີຄວາມກັງວົນຕໍ່ກັບເນື້ອຫາວິຊາຮຽນ ດ້ວຍສາເຫດນີ້ພວກຂ້າພະເຈົ້າຈຶ່ງມີຄວາມສົນໃຈຢາກສຶກສາປັດໄຈທີ່ສົ່ງຜົນຕໍ່ການຮຽນຂອງນັກສຶກສາໃນຊັ້ນປີທີ 3 ຂອງຄະນະວິທະຍາສາດທຳມະຊາດ

ຈຸດປະສົງຂອງການຄົ້ນຄວ້າໃນຄັ້ງນີ້ແມ່ນ 1) ເພື່ອວິເຄາະປັດໄຈຕ່າງໆທີ່ມີຜົນຕໍ່ການຮຽນຂອງນັກສຶກສາ ແລະ 2) ເພື່ອວິເຄາະປັດໄຈທີ່ສາມາດພະຍາກອນຜົນການຮຽນຂອງນັກສຶກສາ.

## 2. ອຸປະກອນ ແລະ ວິທີການ

ແບບແຜນການວິໄຈຄັ້ງນີ້ເປັນການວິໄຈແບບສຳຫຼວດຄວາມຄິດເຫັນຂອງຕົວແທນກຸ່ມປະຊາກອນທີ່ນຳມາສຶກສາ (Survey Research)

### 2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນນັກສຶກສາປີທີ 3 ທີ່ກຳລັງສຶກສາຢູ່ໃນຄະນະວິທະຍາສາດທຳມະຊາດຈຳນວນທັງໝົດ 118 ຄົນ ແລະ ນຳມາເປັນກຸ່ມຕົວຢ່າງຈຳນວນ 91 ຄົນ (ການກຳໜົດກຸ່ມຕົວຢ່າງ ໂດຍໃຊ້ສູດຂອງທ່ານ Taro Yamane)

### 2.2 ກອບແນວຄິດຂອງການວິໄຈ




### 2.3 ເຄື່ອງມືທີ່ໃຊ້ໃນການວິໄຈ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບດ້ວຍແບບສອບຖາມ ເຊິ່ງປະກອບມີ 3 ພາກສ່ວນ ດັ່ງນີ້:

- ສ່ວນທີ່ 1: ຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ.

- ສ່ວນທີ່ 2: ປັດໄຈດ້ານຕ່າງໆທີ່ສົ່ງຜົນຕໍ່ການຮຽນຂອງນັກສຶກສາໃນຊັ້ນປີທີ 3 ຂອງຄະນະວິທະຍາສາດທຳມະຊາດ. ໂດຍແບບສອບຖາມຈະມີລັກສະນະແບບມາດຕາສ່ວນປະມານຄ່າວິທີຂອງ Likert scale ໂດຍກຳນົດຄະແນນໄວ້ 5 ລະດັບດັ່ງນີ້:

| | |
|---|---|
| 5 ໝາຍເຖິງ | ມີຜົນໃນລະດັບຫຼາຍທີ່ສຸດ |
| 4 ໝາຍເຖິງ | ມີຜົນໃນລະດັບຫຼາຍ |
| 3 ໝາຍເຖິງ | ມີຜົນໃນລະດັບປານກາງ |
| 2 ໝາຍເຖິງ | ມີຜົນໃນລະດັບໜ້ອຍ |
| 1 ໝາຍເຖິງ | ມີຜົນໃນລະດັບໜ້ອຍທີ່ສຸດ |

- ສ່ວນທີ 3: ຂໍ້ສະເໜີກ່ຽວກັບປັດໄຈດ້ານຕ່າງໆ.

▪ ວິທີການສ້າງເຄື່ອງມື ແລະ ກວດສອບເຄື່ອງມື

ການສ້າງເຄື່ອງມືໃນການລົງເກັບກຳຂໍ້ມູນ ຜູ້ວິໄຈໄດ້ດຳເນີນການດັ່ງນີ້:

1) ສຶກສາຈາກເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ ແລະ ກຳນົດເປັນກອບແນວຄິດໃນການ ສ້າງແບບສອບຖາມ.

2) ດຳເນີນການສ້າງ ແລະ ພັດທະນາແບບສອບຖາມ

3) ນຳເອົາແບບສອບຖາມໄປຜ່ານຜູ້ຊ່ຽວຊານໃຫ້ຄວາມເຫັນ ແລະ ກວດສອບ ເພື່ອຫາຄ່າຄວາມທ່ຽງຕົງຂອງເນື້ອໃນຄຳຖາມ ແລະ ຄຳສັບທີ່ໃຊ້ ຖືກຕ້ອງ ຫຼື ບໍ່, ໂດຍມີເກນການໃຫ້ຄະແນນດັ່ງນີ້ (ພວງລັດ ທະວີລັດ, 2543 ອ້າງໃນ Gumjudpai, 2017).

| | |
|---|---|
| ມີຄວາມເໝາະສົມ ແລະ ສອດຄ່ອງ ໃຫ້ຄະແນນ | + 1 |
| ບໍ່ເໝາະສົມ ແລະ ບໍ່ສອດຄ່ອງ ໃຫ້ຄະແນນ | - 1 |
| ບໍ່ແນ່ໃຈ ໃຫ້ຄະແນນ | 0 |

4) ຈາກນັ້ນນຳເອົາແບບສອບຖາມໄປໃຊ້ກັບກຸ່ມຕົວຢ່າງທີ່ຕ້ອງການສຶກສາ.

ການທົດສອບແບບສອບຖາມ

ໃນການວິໄຈຄັ້ງນີ້ ຜູ້ວິໄຈໄດ້ໃຊ້ແບບສອບຖາມເພື່ອເປັນເຄື່ອງມືໃນການລົງເກັບກຳຂໍ້ມູນ ແລະ ໄດ້ທົດສອບຄຸນນະພາບຂອງແບບສອບຖາມໃນດ້ານຄວາມຖືກຕ້ອງ ແລະ ຄວາມເຊື່ອຖືໄດ້ຂອງແບບສອບຖາມທີ່ສ້າງຂຶ້ນເພື່ອໃຊ້ເປັນເຄື່ອງມືໃນການວັດສິ່ງທີ່ຕ້ອງການສຶກສາ ດັ່ງນີ້.

- ໃນດ້ານຄວາມຖືກຕ້ອງຂອງເນື້ອໃນເພື່ອກວດສອບເນື້ອໃນຂອງແບບສອບຖາມທີ່ສ້າງຂຶ້ນ ແລະ ໃຫ້ຄະແນນຄວາມຖືກຕ້ອງຂອງຂໍ້ຄຳຖາມ ເຫັນວ່າ ຄ່າ IOC (Index of consistency) ທີ່ຄຳນວນໄດ້ຫຼາຍກວ່າ ແລະ ເທົ່າກັບ 0.5 ສະແດງວ່າ ສາມາດນຳໄປໃຊ້ໃນການດຳເນີນການວິໄຈໄດ້ໃນຂັ້ນຕໍ່ໄປ.

- ການທົດສອບຄວາມເຊື່ອໝັ້ນຂອງແບບສອບຖາມ ຜູ້ວິໄຈໄດ້ນຳແບບສອບຖາມທີ່ໄດ້ປັບປຸງແກ້ໄຂແລ້ວໄປທົດສອບກັບ ປະຊາກອນ ທີ່ບໍ່ແມ່ນກຸ່ມປະຊາກອນເປົ້າໝາຍໃນຈຳນວນ 30 ຄົນ ແລະ ສາມາດຄຳນວນຫາຄ່າຄວາມເຊື່ອໝັ້ນຂອງແບບສອບຖາມໄດ້ເຖິງ 98.97%, ຈາກນັ້ນນຳເອົາແບບສອບຖາມທີ່ໄດ້ທົດສອບແລ້ວມາກວດສອບ ແລະ ປັບປຸງຄືນອີກຄັ້ງໜຶ່ງ ຫຼັງຈາກນັ້ນກໍ່ນຳເອົາແບບສອບຖາມໄປໃຊ້ເປັນເຄື່ອງມືໃນການເກັບລວບລວມຂໍ້ມູນ.

## 2.4 ການເກັບລວບລວມຂໍ້ມູນ

ໃນການເກັບກຳຂໍ້ມູນການວິໄຈຄັ້ງນີ້ ຜູ້ວິໄຈໄດ້ສ້າງແບບສອບຖາມການເກັບກຳຂໍ້ມູນຄືໄດ້ຈາກການສຶກສາເອກະສານແລະງານວິໄຈທີ່ກ່ຽວຂ້ອງກັບປັດໄຈທັງ 5 ດ້ານ ແລະ ນຳເນື້ອໃນຂໍ້ຄຳຖາມທີ່ໄດ້ໄປກວດສອບຄ່າ IOC ຈາກຜູ້ຊ່ຽວຊານ ແລ້ວນຳມາປັບປຸງຄືນເພື່ອໃຫ້ໄດ້ແບບສອບຖາມທີ່ສົມບູນ ຈາກນັ້ນຂໍໃບສະເໜີຂໍລົງເກັບກຳຂໍ້ມູນຈາກຄະນະບໍດີຄະນະວິທະຍາສາດ ເພື່ອນຳໄປສະເໜີຕໍ່ຄູທີ່ປຶກສາຂອງແຕ່ລະຊັ້ນຮຽນແລ້ວລົງເກັບກຳຂໍ້ມູນຕົວຈິງຈາກນັກສຶກສາທີ່ເປັນກຸ່ມເປົ້າໝາຍໃນການໃຫ້ຂໍ້ມູນການວິໄຈຄັ້ງນີ້.

## 2.5 ສະຖິຕິທີ່ໃຊ້ໃນການວິໄຈ

ໃນການວິໄຈຄັ້ງນີ້ຜູ້ວິໄຈນຳໃຊ້ ໂປຣແກຣມ SPSS FORWINDOWS ໃນການຫາຄ່າສະຖິຕິພັນລະນາ ແລະ ການວິເຄາະການທົດຖອຍດ້ວຍວິທີ Enter (Enter Regression Analysis )

# 3. ຜົນໄດ້ຮັບ

## 3.1 ວິເຄາະຂໍ້ມູນກ່ຽວກັບປັດໄຈທີ່ມີຜົນຕໍ່ການຮຽນຂອງນັກສຶກສາຄະນະວິທະຍາສາດທຳມະຊາດ

### 3.1.1 ການວິເຄາະຂໍ້ມູນປັດໄຈດ້ານຄູທີ່ສອນທີ່ມີຜົນຕໍ່ການຮຽນຂອງນັກສຶກສາ.

ສັງເກດເຫັນວ່າປັດໄຈທາງດ້ານຄູສອນທີ່ມີຜົນຕໍ່ການຮຽນຂອງນັກສຶກສາໂດຍລວມແລ້ວມີຄ່າສະເລ່ຍໃນລະດັບຫຼາຍຄື: ຄ່າສະເລ່ຍເທົ່າກັບ 3.76 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.85 ເມື່ອພິຈາລະນາເປັນຂໍ້ແລ້ວພົບວ່າຂໍ້ທີ່ມີຄ່າສະເລ່ຍສູງສຸດແມ່ນຄູສອນບໍ່ໄດ້ກະກຽມບົດຮຽນກ່ອນຂຶ້ນຫ້ອງສອນຊຶ່ງມີຄ່າສະເລ່ຍເທົ່າກັບ 3.87 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.87, ຮອງລົງມາແມ່ນອາຈານບໍ່ເປີດໂອກາດໃຫ້ນັກສຶກສາໄດ້ຖາມໃນເລື່ອງທີ່ຮຽນ ແລະ ອາຈານບໍ່ສະຫຼຸບເນື້ອໃນຫຼັງທີ່ສອນທີ່ມີຄ່າສະເລ່ຍເທົ່າກັບ 3.84 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.90 ແລະ ຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດຄື: ອາຈານເລືອກປະຕິບັດແລະໃຫ້ຄວາມເອົາໃຈໃສ່ຕໍ່ກັບນັກສຶກສາບໍ່ທົ່ວເຖິງຊຶ່ງມີຄ່າສະເລ່ຍເທົ່າກັບ 3.68 ແລະ ຄ່າຜັນປ່ຽນມາຖານເທົ່າກັບ 0.89, ຈາກການຕອບແບບສອບຖາມຂອງນັກສຶກສາເຫັນວ່າການເປີດໂອກາດໃຫ້ນັກຮຽນໄດ້ຖາມໃນເລື່ອງທີ່ຮຽນ ແລະ ການສະຫຼຸບບົດຮຽນຂອງອາຈານຍັງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ ແລະ ການຮຽນ-ການສອນ ແມ່ນໄດ້ເອົາໃຈໃສ່ຕໍ່ກັບນັກຮຽນບໍ່ທົ່ວເຖິງ ແລະ ໄດ້ນຳພານັກສຶກສາແກ້ບົດຝຶກຫັດວຽກບ້ານໃນລະຫວ່າງການຮຽນ-ການສອນ.

### 3.1.2 ການວິເຄາະຂໍ້ມູນປັດໄຈດ້ານຫຼັກສູດການຮຽນ-ການສອນທີ່ມີຜົນຕໍ່ການຮຽນຂອງນັກສຶກສາ.

ສັງເກດເຫັນວ່າປັດໄຈທາງດ້ານຫຼັກສູດການຮຽນ-ການສອນທີ່ມີຜົນຕໍ່ການຮຽນຂອງນັກສຶກສາໂດຍລວມແລ້ວຢູ່ໃນລະດັບປານກາງຄື: ຄ່າສະເລ່ຍເທົ່າກັບ 3.38 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 1.04 ເມື່ອພິຈາລະນາເປັນຂໍ້ເຫັນວ່າຄ່າສະເລ່ຍສູງກວ່າໝູ່ແມ່ນການຈັດເນື້ອໃນບົດຮຽນບໍ່ເປັນໄປຕາມລະດັບການຮຽນຮູ້ຂອງນັກສຶກສາເຊິ່ງຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 4.08 ແລະ ມີຄ່າຜັນປ່ຽນມາດຖານເທົ່າກັບ 0.98, ຮອງລົງມາແມ່ນຈັດເນື້ອໃນບົດຮຽນບໍ່ມີຄວາມສອດຄ່ອງເຊິ່ງຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 3.75 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 1.00 ແລະ ມີຄ່າສະເລ່ຍຕໍ່າກວ່າໝູ່ແມ່ນການກຳນົດວິຊາຮຽນໂດຍຄຳນຶງເຖິງສັດສ່ວນ ແລະ ລະດັບຄວາມຮັບຮູ້ຂອງນັກສຶກສາເຊິ່ງຢູ່ໃນລະດັບປານກາງ ມີຄ່າສະເລ່ຍເທົ່າກັບ 2.82 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 1.24.

### 3.1.3 ການວິເຄາະຂໍ້ມູນປັດໄຈດ້ານສິ່ງອຳນວຍຄວາມສະດວກຕໍ່ການຮຽນທີ່ມີຜົນຕໍ່ການຮຽນຂອງນັກສຶກສາ

ສັງເກດເຫັນວ່າປັດໄຈທາງດ້ານສິ່ງອໍານວຍຄວາມສະດວກທີ່ມີຜົນຕໍ່ການຮຽນຂອງນັກສຶກສາໂດຍລວມແລ້ວຢູ່ໃນລະດັບປານກາງ ມີຄ່າສະເລ່ຍເທົ່າກັບ 3.23 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ1.01 ເມື່ອພິຈາລະນາເປັນຂໍ້ເຫັນວ່າ ຄ່າສະເລ່ຍສູງກວ່າໝູ່ແມ່ນຫ້ອງສະໝຸດການອໍານວຍຄວາມສະດວກດ້ານເອກະສານ ແລະ ສື່ການຮຽນຍັງຕອບສະໜອງບໍ່ໄດ້ກັບຄວາມຕ້ອງການຂອງແຕ່ລະລາຍວິຊາ ມີຄ່າສະເລ່ຍ 3.56 ແລະ ມີຄ່າຜັນປ່ຽນມາດຖານເທົ່າກັບ 0.87, ຮອງລົງມາແມ່ນມີສະຖານທີ່ພັກຜ່ອນນອກຫ້ອງຮຽນຢ່າງພຽງພໍເຊິ່ງຢູ່ໃນລະດັບປານກາງ ມີຄ່າສະເລ່ຍເທົ່າກັບ 3.26 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 1.04 ແລະ ມີຄ່າສະເລ່ຍຕໍ່າກວ່າໝູ່ແມ່ນມີເອກະສານ ແລະ ປຶ້ມຕໍາລາຮຽນພຽງພໍເພື່ອເອື້ອອໍານວຍຕໍ່ການຄົ້ນຄວ້າເພີ່ມເຕີມດ້ວຍຕົນເອງເຮັດໃຫ້ສົ່ງຜົນຕໍ່ການຮຽນໃນລະດັບປານກາງ ມີຄ່າສະເລ່ຍເທົ່າກັບ 2.99 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 1.14.

### 3.1.4 ການວິເຄາະຂໍ້ມູນປັດໄຈດ້ານພຶດຕິກໍາຂອງຜູ້ຮຽນທີ່ມີຜົນຕໍ່ການຮຽນຂອງນັກສຶກສາ

ສັງເກດເຫັນວ່າປັດໄຈທາງດ້ານພຶດຕິກໍາຜູ້ຮຽນທີ່ມີຜົນຕໍ່ການຮຽນຂອງນັກສຶກສາໂດຍລວມແລ້ວຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 3.61 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.92. ເມື່ອພິຈາລະນາເປັນຂໍ້ເຫັນວ່າຄ່າສະເລ່ຍສູງກວ່າໝູ່ແມ່ນຄິດວ່າການຮຽນເປັນສິ່ງທີ່ມີປະໂຫຍດຕໍ່ຊີວິດຕົນເອງໃນອານາຄົດເຊິ່ງຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 3.70 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.92, ຮອງລົງມາແມ່ນການທົບທວນຄວາມຮູ້ເກົ່າກ່ອນເລີ່ມຮຽນຫົວຂໍ້ໃໝ່ ແລະ ຄົ້ນຄວ້າຫາຄວາມຮູ້ເພີ່ມເຕີມຢ່າງສະໝໍ່າສະເໝີເຊິ່ງຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 3.62 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 1.00 ແລະ ຄ່າສະເລ່ຍຕໍ່າກວ່າໝູ່ແມ່ນການແກ້ບົດຝຶກຫັດ ຫຼື ເຮັດວຽກບ້ານທີ່ໄດ້ຮັບມອບໝາຍ ແລະ ເມື່ອບໍ່ເຂົ້າໃຈບົດຮຽນແມ່ນບໍ່ໄດ້ຂໍຄໍາປຶກສາຈາກອາຈານຫຼືເພື່ອນໃນຫ້ອງເຊິ່ງຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 3.54 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.86. ເນື່ອງຈາກການຕອບແບບສອບຖາມຂອງນັກສຶກສາເຫັນວ່າ ການທົບທວນບົດຮຽນເກົ່າກັບນັກສຶກສາເພື່ອເຂົ້າຄວາມຮູ້ໃໝ່ ແລະ ການແກ້ບົດຝຶກຫັດ ຫຼື ວຽກບ້ານ ຂອງອາຈານຍັງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ. ສະນັ້ນ, ອາຈານຄວນເອົາໃຈໃສ່ກ່ຽວກັບການທົບທວນບົດຮຽນກ່ອນເຂົ້າຂໍ້ໃໝ່, ຕ້ອງໃຫ້ນັກສຶກສາແກ້ວຽກບ້ານດ້ວຍຕົນເອງໂດຍການເລືອກເອົານັກສຶກສາຂຶ້ນແກ້ວຽກບ້ານຢູ່ໃນກະດານ.

### 3.1.5 ການວິເຄາະຂໍ້ມູນປັດໄຈດ້ານຄອບຄົວທີ່ມີຜົນຕໍ່ການຮຽນຂອງນັກສຶກສາ

ສັງເກດເຫັນວ່າປັດໄຈທາງດ້ານຄອບຄົວທີ່ມີຜົນຕໍ່ການຮຽນຂອງນັກສຶກສາໂດຍລວມແລ້ວຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 3.74 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.94. ເມື່ອພິຈາລະນາເປັນຂໍ້ເຫັນວ່າຄ່າສະເລ່ຍສູງສຸດແມ່ນດ້ານເສດຖະກິດຂອງຄອບຄົວທີ່ສົ່ງຜົນຕໍ່ການຮຽນຫຼາຍທີ່ສຸດ ມີຄ່າສະເລ່ຍເທົ່າກັບ 3.89 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.96, ຮອງລົງມາແມ່ນຄອບຄົວໃຫ້ການສົ່ງເສີມທາງການສຶກສາ ແລະ ສົນໃຈໃນຜົນການຮຽນຢ່າງສະໝໍ່າສະເໝີເຮັດໃຫ້ມີກໍາລັງໃຈໃນການຮຽນເຊິ່ງຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 3.80 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.97, ຄ່າສະເລ່ຍຕໍ່າກວ່າໝູ່ແມ່ນມີຄວາມຄາດຫວັງຕໍ່ອາຊີບໃນອານາຄົດເມື່ອສໍາເລັດການສຶກສາເຊິ່ງຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 3.60 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.91.

## 3.2 ຜົນການວິເຄາະປັດໄຈດ້ານຕ່າງໆດ້ວຍສົມຜົນທົດຖອຍແບບພະຫຸຄູນ

ເຫັນວ່າ ຕົວປ່ຽນເອກະລາດທີ່ຖືກຄັດເລືອກເຂົ້າໄປຢູ່ໃນສົມຜົນທົດຖອຍ ຫຼື ສົມຜົນພະຍາກອນມີ 3 ຕົວປ່ຽນຄື: ປັດໄຈດ້ານຜູ້ສອນ (ຄູທີ່ສອນ) $X_1$ ແລະ ປັດໄຈດ້ານຄອບຄົວ $X_5$ ມີຄວາມສໍາພັນກັບຜົນການຮຽນຂອງນັກສຶກສາ ທີ່ລະດັບຄວາມສໍາຄັນ 0.05 ແລະ ປັດໄຈດ້ານພຶດຕິກໍາຂອງຜູ້ຮຽນ $X_4$ ມີຄວາມສໍາພັນກັບຜົນການຮຽນກັບນັກສຶກສາທີ່ມີລະດັບຄວາມສໍາຄັນ 0.01. ເຊິ່ງທັງ 3 ຕົວປ່ຽນມີຄວາມສໍາພັນກັບຜົນການຮຽນຂອງນັກສຶກສາຊັ້ນປີທີ 3 ຂອງຄະນະວິທະຍາສາດທໍາມະຊາດ ເທົ່າກັບ 0.62 ໂດຍຕົວປ່ຽນທາງ 3 ຕົວປ່ຽນສາມາດພະຍາກອນຜົນການຮຽນຂອງນັກສຶກສາຮ່ວມກັນໄດ້ເຖິງ 62% ແລະ ມີຄວາມຄາດເຄື່ອນມາດຖານໃນການພະຍາກອນເທົ່າກັບ 0.5.

ດັ່ງນັ້ນ, ສົມຜົນທົດຖອຍໃນການພະຍາກອນຜົນການຮຽນຂອງນັກສຶກສາ ຊັ້ນປີທີ 3 ຂອງຄະນະວິທະຍາສາດທໍາມະຊາດ ໃນຮູບແບບຄະແນນດິບ ແລະ ຄະແນນມາດຕະຖານມີດັ່ງນີ້:

- ສົມຜົນໃນຮູບແບບຂອງຄະແນນດິບ

$$\hat{Y} = 2.72 - 0.27X_1 + 0.43X_4 - 0.24X_5$$

- ສົມຜົນໃນຮູບແບບຂອງຄະແນນມາດຕະຖານ

$$\hat{Z} = -0.32Z_1 + 0.54Z_4 - 0.34Z_5$$

ຊຶ່ງວ່າ: $\hat{Y}$ ໝາຍເຖິງ ຜົນການຮຽນຂອງນັກສຶກສາຊັ້ນປີທີ 3 ຂອງຄະນະວິທະຍາສາດທຳມະຊາດ

$X_1$ ໝາຍເຖິງ ປັດໄຈດ້ານຜູ້ສອນ (ຄູທີ່ສອນ)

$X_4$ ໝາຍເຖິງ ປັດໄຈດ້ານພຶດຕິກຳຂອງຜູ້ຮຽນ

$X_5$ ໝາຍເຖິງ ປັດໄຈດ້ານຄອບຄົວ

$\hat{Z}$ ໝາຍເຖິງ ຜົນການຮຽນຂອງນັກສຶກສາຊັ້ນປີທີ 3 ຂອງຄະນະວິທະຍາສາດທຳມະຊາດໃນຮູບແບບຄະແນນມາດຕະຖານ

$Z_1$ ໝາຍເຖິງ ປັດໄຈດ້ານຜູ້ສອນ(ຄູທີ່ສອນ) ໃນຮູບແບບຄະແນນມາດຕະຖານ

$Z_4$ ໝາຍເຖິງ ປັດໄຈດ້ານພຶດຕິກຳຂອງຜູ້ຮຽນ ໃນຮູບແບບຄະແນນມາດຕະຖານ

$Z_5$ ໝາຍເຖິງ ປັດໄຈດ້ານຄອບຄົວ ໃນຮູບແບບຄະແນນມາດຕະຖານ

ເມື່ອພິຈາລະນາຄ່າສຳປະສິດການທົດຖອຍຂອງຕົວພະຍາກອນພົບວ່າ ປັດໄຈດ້ານພຶດຕິກຳຂອງຜູ້ຮຽນສາມາດພະຍາກອນຜົນການຮຽນຂອງນັກສຶກສາຊັ້ນປີທີ 3 ຂອງຄະນະວິທະຍາສາດທຳມະຊາດໄດ້ສູງສຸດ ໂດຍມີຄ່າສຳປະສິດການທົດຖອຍໃນຮູບແບບຄະແນນດິບ ແລະ ໃນຮູບແບບຄະແນນມາດຕະຖານເທົ່າກັບ b = 0.43, $\beta$ = 0.54 ຮອງລົງມາແມ່ນ ປັດໄຈດ້ານຄອບຄົວ ໂດຍມີຄ່າສຳປະສິດການທົດຖອຍໃນຮູບແບບຄະແນນດິບ ແລະ ໃນຮູບແບບຄະແນນມາດຕະຖານເທົ່າກັບ b = -0.24, $\beta$ = -0.34 ສ່ວນປັດໄຈດ້ານຜູ້ສອນ (ຄູທີ່ສອນ) ສາມາດພະຍາກອນຜົນການຮຽນຂອງນັກສຶກສາຊັ້ນປີທີ 3 ຄະນະວິທະຍາສາດທຳມະຊາດໄດ້ໜ້ອຍທີ່ສຸດ ໂດຍມີຄ່າສຳປະສິດການທົດຖອຍໃນຮູບແບບຄະແນນດິບ ແລະ ໃນຮູບແບບຄະແນນມາດຕະຖານເທົ່າກັບ b = -0.27, $\beta$ = -0.32.

## 4. ວິພາກຜົນ

ຈາກຜົນການວິເຄາະພົບວ່າ: ປັດໄຈດ້ານຜູ້ສອນ (ຄູທີ່ສອນ), ປັດໄຈດ້ານຄອບຄົວ ແລະ ປັດໄຈດ້ານພຶດຕິກຳຂອງຜູ້ຮຽນມີຜົນຕໍ່ການຮຽນຂອງນັກສຶກສາຫຼາຍທີ່ສຸດເຊິ່ງສອດຄ່ອງກັບແນວຄວາມຄິດຂອງປຣີຍະທິບ ບຸນຄົງ ອ້າງເຖິງໃນ Khamsiya (2008) ທີ່ໄດ້ກ່າວເຖິງອົງປະກອບທີ່ມີອິດທິພົນຕໍ່ຜົນສຳເລັດທາງການຮຽນປະກອບດ້ວຍດ້ານຄຸນລັກສະນະການຈັດການຮຽນການສອນໃນໂຮງຮຽນ, ຄຸນລັກສະນະຂອງຄູສອນ, ຄຸນລັກສະນະຂອງນັກຮຽນ, ດ້ານເສດຖະກິດ ແລະ ສອດຄ່ອງກັບແນວຄິດຂອງ Prescott (1961) ທີ່ໄດ້ກ່າວວ່າອົງປະກອບທາງຄວາມສຳພັນໃນເພື່ອນໄວດຽວກັນ ມີຜົນຕໍ່ຄວາມສຳເລັດທາງການຮຽນຂອງນັກຮຽນ. ນອກຈາກນັ້ນ ຍັງສອດຄ່ອງກັບງານວິໄຈຂອງ Linoinou (2015) ທີ່ໄດ້ສະຫຼຸບໄວ້ວ່າ “ປັດໄຈແລະສາເຫດທີ່ເຮັດໃຫ້ນັກຮຽນ ມ ປາຍ ຮຽນອ່ອນຄະນິດສາດ” ປະກອບດ້ວຍ 1) ດ້ານຄູສອນມີບັນຫາຫຼາຍທີ່ສຸດ ຄື ຫຼັງຈາກສອນທິດສະດີແລ້ວຄູມີເວລາແກ້ຝຶກຫັດໜ້ອຍຫຼາຍ, 2) ບັນຫາດ້ານຫຼັກສູດ ຄືການກຳນົດຈຸດປະສົງບົດຮຽນບໍ່ສອດຄ່ອງກັບເນື້ອໃນບົດຮຽນ ແລະ ກິດຈະກຳການຮຽນ, 3) ດ້ານສື່ການສອນ ແລະ ດ້ານຄອບຄົວສ່ວນໃຫຍ່ພໍ່ແມ່ບໍ່ໃຫ້ການສົ່ງເສີມ ແລະ ບໍ່ເຫັນຄວາມສຳຄັນຕໍ່ວຽກງານການສຶກສາຂອງລູກໆ ແລະ ຍັງສອດຄ່ອງກັບງານວິໄຈຂອງ Techaphanratanakul (2012) ແລະ Rattanapaiboon (2007) ທີ່ໄດ້ອະທິບາຍວ່າ ພຶດຕິກຳການຮຽນ-ການສອນ, ແຮງຈູງໃຈ, ສະພາບແວດລ້ອມທາງການຮຽນ ມີຜົນກະທົບຕໍ່ຄວາມສຳເລັດທາງການຮຽນຂອງນັກຮຽນ; ພ້ອມກັນນັ້ນຍັງສອດຄ່ອງກັບງານວິໄຈຂອງ Namkhot (2016) ທີ່ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ບັນຫາການຮຽນຄະນິດສາດຂອງນັກຮຽນຊັ້ນມັດທະຍົມປີທີ 3 ໂຮງຮຽນຣາຊສະສີມາວິທະຍາໄລ ພົບວ່າ ປັດໄຈດ້ານສ່ວນຕົວ, ປັດໄຈຄອບຄົວ ແລະ ປັດໄຈດ້ານສິ່ງແວດລ້ອມມີບັນຫາຕໍ່ການຮຽນຄະນິດສາດຫຼາຍທີ່ສຸດ ແລະ ງານວິໄຈຂອງ Intachai (2016) ສຶກສາກ່ຽວກັບ ປັດໄຈທີ່ມີຄວາມສຳພັນຕໍ່ຜົນສຳເລັດທາງການຮຽນວິຊາຄະນິດສາດ ຂອງນັກສຶກສາ ວິສະວະກຳສາດ ມະຫາວິທະຍາໄລເທັກໂນໂລຢີ ລາຊມົງຄົນລ້ານນາ ຊຽງໃໝ່ ໂດຍໃຊ້ວິທີການວິເຄາະການຖົດຖອຍພະຫຸຄູນ. ຈາກຜົນການວິໄຈພົບວ່າ ຄຸນນະພາບການສອນ ແລະ ພຶດຕິກຳຕໍ່ການຮຽນ ມີຄວາມສຳພັນທາງບວກກັບຜົນສຳເລັດທາງການຮຽນ ເພາະວ່າຄູສອນມີຜົນກະທົບໂດຍກົງຕໍ່ກັບຜົນການຮຽນຂອງນັກສຶກສາ. ດັ່ງນັ້ນ, ຈຶ່ງຂໍສະເໜີຜົນການສຶກສາໃຫ້ກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອາຈານຜູ້ສອນ ນຳຜົນການສຶກສານີ້ໄປໃຊ້ໃຫ້ເກີດປະໂຫຍດເພື່ອນຳໄປພັດທະນາການຮຽນ-ການສອນໃຫ້ນັກສຶກສາມີຜົນການຮຽນທີ່ດີກວ່າເກົ່າດັ່ງນີ້:

1) ປັດໄຈດ້ານຄູສອນ ມີຄວາມສຳພັນກັນທາງລົບກັບຜົນການຮຽນຂອງນັກສຶກສາ ໝາຍຄວາມວ່າ ຖ້ານັກສຶກສາໄດ້ຮັບການສອນຈາກອາຈານທີ່ຂາດປະສົບການ, ບໍ່ໄດ້ຜ່ານວິຊາຄູມາກ່ອນຈະເຮັດໃຫ້ມີຜົນຕໍ່ກັບຜົນການຮຽນຂອງນັກສຶກສາໄດ້ຫຼາຍຂຶ້ນ, ເຊິ່ງເປັນຜູ້ທີ່ໃຫ້ຄວາມຮູ້, ວິທີການສອນຂອງຄູມີຄວາມສຳຄັນຫຼາຍສຳລັບຜູ້ຮຽນ, ສະນັ້ນຄູຜູ້ສອນຈະຕ້ອງໄດ້ຮັບການຝຶກຝົນທັກສະການສອນເພື່ອໃຫ້ເກີດຄວາມຮູ້ຢ່າງແທ້ຈິງ.

ຖ້າຄູຜູ້ສອນມີວິທີການສອນທີ່ຫຼາກຫຼາຍມີການໃຊ້ອຸປະກອນປະກອບການສອນທີ່ທັນສະໄໝໃນການໃຊ້ຄຳຖາມທີ່ກະຕຸ້ນໃຫ້ຜູ້ຮຽນຕິດຕາມມີເທັກນິກໃນການນຳເຂົ້າສູ່ບົດຮຽນທີ່ໜ້າສົນໃຈຍິ່ງເປັນຜົນດີໃຫ້ແກ່ຜູ້ຮຽນຫຼາຍ.

2) ປັດໄຈດ້ານພຶດຕິກຳຂອງຜູ້ຮຽນ ມີການພົວພັນກັບຜົນການຮຽນຂອງນັກສຶກສາໃນທາງບວກ ໝາຍຄວາມວ່າ ເມື່ອນັກສຶກສາມີພຶດຕິກຳການຮຽນທີ່ດີເຊັ່ນ: ບໍ່ເລືອກຮຽນ ແລະ ໃຫ້ຄວາມເອົາໃຈໃສ່ໃນແຕ່ລະວິຊາຮຽນ, ສຶກສາຄົ້ນຄວ້າຫາຄວາມຮູ້ເພີ່ມເຕີມຢ່າງສະໝ່ຳສະເໝີ ແລະເຮັດວຽກບ້ານຕາມການມອບໝາຍ ເມືອບໍ່ເຂົ້າໃຈບົດຮຽນກໍ່ຄວນສະເໜີໃຫ້ອາຈານໃຫ້ຄຳເຫັນໃນສິ່ງທີ່ຕົນເອງສົນໃຈສຶກສາ ເຊິ່ງມັນຈະເຮັດໃຫ້ນັກສຶກສາມີຜົນການຮຽນທີ່ດີຂຶ້ນ.

3) ປັດໄຈດ້ານຄອບຄົວ ມີຄວາມສຳພັນທາງລົບກັບຜົນການຮຽນຂອງນັກສຶກສາ ໝາຍຄວາມວ່າ ເມື່ອຄອບຄົວບໍ່ໃຫ້ການສົ່ງເສີມ ຫຼື ຕອບສະໜອງບໍ່ໄດ້ຕາມຄວາມຕ້ອງການອາດຈະເຮັດໃຫ້ມີຜົນກະທົບຕໍ່ກັບຜົນການຮຽນຫຼາຍຂຶ້ນ.

## 5. ສະຫຼຸບ

ປັດໄຈທີ່ມີຜົນຕໍ່ການຮຽນຂອງນັກສຶກສາຫຼາຍກວ່າໝູ່ແມ່ນປັດໄຈທາງດ້ານຄູສອນ, ຮອງລົງມາແມ່ນປັດໄຈທາງດ້ານຄອບຄົວ, ທີ່ສາມແມ່ນດ້ານພຶດຕິກຳຂອງຜູ້ຮຽນ ແລະປັດໄຈທີ່ມີຜົນຕໍ່ການຮຽນຂອງນັກຮຽນໜ້ອຍທີ່ສຸດແມ່ນດ້ານສິ່ງອຳນວຍຄວາມສະດວກຕໍ່ການຮຽນ ເປັນຕົ້ນ. ເມື່ອພິຈາລະນາຈາກຜົນການວິເຄາະຄວາມສຳພັນດ້ວຍສົມຜົນທົດຖອຍແບບພະຫຸຄູນ ເຫັນວ່າ ປັດໄຈດ້ານພຶດຕິກຳຂອງຜູ້ຮຽນສາມາດພະຍາກອນຜົນການຮຽນຂອງນັກສຶກສາຊັ້ນປີທີ 3 ຂອງຄະນະວິທະຍາສາດທຳມະຊາດໄດ້ສູງສຸດ, ຮອງລົງມາແມ່ນປັດໄຈດ້ານຄອບຄົວ, ສ່ວນປັດໄຈດ້ານຜູ້ສອນ (ຄູທີ່ສອນ) ສາມາດພະຍາກອນຜົນການຮຽນຂອງນັກສຶກສາຊັ້ນປີທີ 3 ຄະນະວິທະຍາສາດທຳມະຊາດໄດ້ໜ້ອຍທີ່ສຸດ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Anothai, S. (2012). Developing a curriculum based on learning outcomes to build the ability of mathematics teachers to manage learner-centered learning in Savannakhet Province, Lao PDR. Thesis, Sakon Nakhon Rajabhat University.

Gumjudpai, S. (2017). Statistics to research on curriculum and Instruction, Faculty of Education. Sakon Nakhon Rajabhat University.

Gumjudpai, S. (2017). The development model of student teachers in improving their understanding of teaching and learning by using reinforcement and learning management that puts students at the center of learning, Sakon Nakhon Rajabhat University.

Intachai, A. (2016). Factors related to the success in mathematics learning of engineering students. Lanna University of Technology, Chiang Mai.

Kaewgra, S. (2011). Factors affecting the learning problems of 2nd year students at Wat Medhakarat School, Phrae Province. Thesis, Srinakarin University.

Khamsiya, N. (2008). Comparison of critical thinking ability and academic achievement in learning subject groups. The use of mathematics and the attitude towards learning mathematics on inequalities of Mathayom 3 students. that are studied using the LT learning method, KWL learning method, and SSCS learning method. MahaSarakham University.

Linoinou, L. (2015). Using a mathematical model to analyze the factors and reasons why high school students are weak in mathematics.

Linoinou, L. (2015). Study the factors and causes that make high school students weak in mathematics. Faculty of Natural Sciences, National University.

Namkhot, W. ( 2016). A study of the factors that affect mathematics learning problems of 3 rd year high school students of Rajasima College. Ramkhamhong University.

Prescott, D.A. (1961). Report of conference on child study education bulletin. Bangkok: Faculty of Education, Chulalongkorn University.

Rattanapaiboon, S. (2007). Factors affecting the mathematics learning behavior of students in the 3rd year of Surat Pittaya School.

Suratthani Province. Srinakharinwirot University.

Sonpett, G. (2014). Attitudes about accounting study problems of accounting students at the Faculty of Business Administration, Siam University. Thesis. Siam University.

Savannakhet University. (2018). Annual summary. Savannakhet University.

Techasirigyenyong, P. (2009). Studying the academic achievement of fourth grade high school students who have been taught inquiry-based methods using mathematics, the subject of reasoning and thesis. Srinagarindrawiroj University.

Savannakhet University. (2018). Annual summary. Savannakhet University.

Techaphanratanakul, N. (2012). Analysis of factors affecting achievement Mathematics learning of undergraduate students of Rajamangala University of Technology Lanna Payap Region, Chiang Mai.

Thitiporn, L. (2014). Factors that affect the decision to study at higher education level and mathematics achievement of first year students. Thesis. Chulalongkorn University.Intachai, A. (2016). Factors related to the success in mathematics learning of engineering students. Lanna University of Technology, Chiang Mai.

Waekaji, F. (2021). Factors influencing mathematics achievement in Mathayom 3. Thesis, Faculty of Education. Songkla Naklin University.